ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento, CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔ລກ/ປພຖຊ/໐໗໔໑໐**

# ຖແລງການ

## ສັລເສີນ ລາວ ມາຢ້ຽມຢາມສະຫະຣັດ.

ພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ກໍຄືປະຊາຊົນລາວທັງຊາດ, ມີຄວາມປາບປື້ມ ຍິນດີນຳການມາຢ້ຽມຢາມສະຫະຣັດ ຂອງຄນະຜູ້ແທນລາວ ຣະດັບສູງ, ແຕ່ວັນທີ 12-14 ກໍຣະກະດາ 2010, ນຳໂດຍທ່ານ ທອງລຸນ ສີສຸຣິດ ຮອງນາຍົກຣັຖມົນຕຣີ ແລະ ຣັຖມົນຕຣີກະຊວງ ການຕ່າງປະເທດ ແລະ ທ່ານເອງ ກໍໄດ້ຖືກຕ້ອນຮັບ ຈາກຣັຖມົນຕຣີກະຊວງການຕ່າງປະເທດ ຂອງສະຫະຣັດ ຍານາງ Hillary Clinton ເປັນຢ່າງດີເໝືອນກັນ.

ການມາຢ້ຽມຢາມ ຂອງຄນະຜູ້ແທນລາວ ຄັ້ງທຳອິດນີ້, ເປັນໜ້າສັລເສີນທີ່ສຸດ!; ເພາະມັນ ບໍ່ພຽງແຕ່ບົ່ງບອກເຖິງບາດລ້ຽວປະວັດສາດ ຂອງຊາດລາວ ທີ່ຫັນປ່ຽນ ຈາກອຳນາດຜເດັດການ ມາເປັນ ເສຣີ ເທົ່ານັ້ນ, ມັນຍັງ ບອກເຖິງການຍອມຮັບ ໃນຄວາມປາຖນາດີຂອງສະຫະຣັດ ທີ່ມີຕໍ່ຣັຖບານ ແລະປະຊາຊົນລາວຕື່ມອີກ.

ຍິ່ງໄປກວ່ານັ້ນ, ມັນຍັງສແດງອອກເຖິງນ້ຳໃຈຮັກຊາດເສັຽສລະ ຂອງພັກຣັດ ທີ່ມີຄວາມກະຕືລືລົ້ນຢາກໃຫ້ ຄວາມສັມພັນທະໄມຕຣີ ອັນດີງາມ ແລະການຮ່ວມມືທາງດ້ານເສຖິດ, ທາງດ້ານວັທນະທັມສັງຄົມ ລະຫວ່າງລາວກັບ ສະຫະຣັດ ໄດ້ມີຄວາມຈເຣີນງອກງາມຍິ່ງໆຂຶ້ນໄປ.

ໃນຄວາມເປັນຈິງແລ້ວ, ການຮ່ວມມືລະຫວ່າງລາວກັບສະຫະຣັດ ໄດ້ມີການພັທນາມາແລ້ວ ຫລາຍ ດ້ານ ແລະມີຄວາມກ້າວໜ້າຂຶ້ນມາເປັນລຳດັບ; ໂດຍສະເພາະດ້ານການຮ່ວມມືທາງດ້ານທະຫານ, ຈາກບ່ອນ ມີແຕ່ຜູ້ບັນຊາການທະຫານ ປະຈຳພາກພື້ນເອເຊັຽປະຊີຟິກ ຂອງສະຫະຣັດໄປຢ້ຽມຢາມຖາມຂ່າວ ກໍກາຍມາ ເປັນການແລກປ່ຽນທູດທະຫານປະຈຳການແລະ ໃນທ້ອງເດືອນເມສາຜ່ານມານີ້, ຄນະແພດທະຫານ 14ຄົນ ຈາກກອງບັນຊາການ ພາກພື້ນເອເຊັຽປາຊີຟິກຂອງສະຫະຣັດ ກໍໄດ້ເຂົ້າໄປຊ່ວຍເຫລືອ, ປິ່ນປົວ ກວດພຍາດ ໃຫ້ປະຊາຊົນໃນແຂວງຊຽງຂວາງ ຢູ່ໂຮງພຍາບານ ລາວ-ມົງໂກເລັຽ ພ້ອມທັງມອບ ອຸປກອນການແພດ ທີ່ທັນສມັຍໃຫ້ພແນກສາທະຣະນະສຸຂແຂວງອີກດ້ວຍ. ການຮ່ວມມືອີກອັນນຶ່ງທີ່ສຳຄັນຍິ່ງ, ກໍຄືການເປີດ ນ່ານຟ້າ ຂອງລາວ ໃຫ້ເຮືອບິນຂອງສະຫະຣັດ ລົງໄດ້ທຸກແຫ່ງ ໃນທົ່ວປະເທດ. ຄວາມສຳພັນ ຮ່ວມມືລະຫວ່າງ ລາວກັບສະຫະຣັດ

ໄດ້ມີຄວາມກ້າວໜ້າເປັນຢ່າງດີ ໃນດ້ານການຊອກຫາຊາກສົບທະຫານ ອະເມຣິກັນ ທີ່ຫາຍສາບສູນໃນປາງສົງຄາມ, ໃນດ້ານການປາບປາມການຄ້າ ຢາເສບຕິດ, ການຄ້າມະນຸດ, ການປົກປັກຮັກສາ ສະພາບແວດລ້ອມດັ່ງນີ້ເປັນຕົ້ນ.

ສະຫະຣັດ ໄດ້ຊຸກຍູ້ໃຫ້ລາວໄດ້ເຂົ້າເປັນສະມາຊິກສະມາຄົມອາຊຽນ, ໄດ້ຍຸກຍູ້ໃຫ້ລາວເປັນ ເຈົ້າພາບຈັດກອງປະຊຸມຕ່າງໆ ໃນຣະດັບສາກົນ ທີ່ສຳຄັນສຳຄັນ, ເປັນຕົ້ນ ກອງປະຊຸມສະມາຄົມອາຊຽນ, ກອງປະຊຸມຣັຖສະພາປະເທດໃນພາກພື້ນອາຊີປາຊີຟິກ ຄັ້ງທີ 17. ນອກຈາກນີ້, ກໍຍັງຊຸກຍູ້ ໃຫ້ລາວໄດ້ເປັນ ເຈົ້າພາບຈັດກອງປະຊຸມ ຣະດັບໂລກຊຶ່ງມີເຖິງ 130 ປະເທດສະມາຊິກເຂົ້າຮ່ວມ ແລະການຈັດຕັ້ງ ສາກົນອື່ນໆ ບໍ່ຕ່ຳກວ່າ 100 ອົງການ ກ່ຽວກັບການປະຕິບັດສົນທິສັນຍາ ຫ້າມຜລິດແລະນຳໃຊ້ ຣະເບີດລູກຫວ່ານ ໃນທ້ອງເດືອນ ພຶສຈິກາ 2010 ທີ່ຈະມາເຖິງນີ້ຕື່ມອີກ. ສ່ວນການພັທນາພື້ນຖານເສຖກິດ ໃຫ້ເປັນໄປຕາມກົນໄກ ຕລາດການຄ້າເສຣີນັ້ນ, ສະຫະຣັດ ໄດ້ເປີດການຄ້າປົກກະຕິກັບລາວ ໄດ້ອະນຸຍາດໃຫ້ ທະນາຄານການຄ້າຂາເຂົ້າ-ຂາອອກ ທີ່ໄດ້ເກືອດຫ້າມໃນເມື່ອກ່ອນນັ້ນ, ໄດ້ປ່ອຍ ເງິນກູ້, ໃຫ້ຄວາມສະດວກແກ່ນັກລົງທຶນ ທີ່ຈະເຂົ້າໄປທຳທຸຣະກິດ ຢູ່ລາວ,

ຍິ່ງໄປກວ່ານັ້ນ, ກໍສົ່ງເສີມການກະກຽມ ເປີດຕລາດຫລັກຊັບແລະການ ເຂົ້າເປັນສະມາຊິກການຄ້າໂລກອີກດ້ວຍ. ເພື່ອເຮັດໃຫ້ ການບໍຣິຫານປະເທດຊາດ ເປັນໄປຕາມກົນໄກຕລາດການຄ້າເສຣີນັ້ນ. ປະທານາທິບໍດີສະຫະຣັດ, ທ່ານ Barack Obama ກໍໄດ້ປະກາດວ່າ "ລາວ ໄດ້ໄດ້ຢຸດຊົງເປັນປະເທດ Marxist-Leninist ແລ້ວ" .ສັ້ນ, ພັກຣັດ ຕ້ອງເລັ່ງປະຕິບັດຕາມເງື່ອນໄຂທີ່ໄດ້ຮັບຈາກກຸ່ມພາຄີ 15 ປະເທດ ໃນການແກ້ໄຂບັນຫາຊາດຮ່ວມກັນ ກັບພວກເຮົາປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ, ກໍຄືປະຊາຊົນລາວທັງຊາດ ໃຫ້ປະກົດເປັນຈິງໂດຍໄວ.. ໃຫ້ເປັນໄປຕາມທີ່ທ່ານ ທອງລຸນ ສີສຸລິດ ໄດ້ປະກາດໃນວັນ ສິດທິສາກົນຄົບຮອບ 60 ປີ. ທ່ານໄດ້ເນັ້ນໜັກວ່າ "ທາງການ ສປປລາວ. ແມ່ນໄດ້ ຮ່ວມມື ກັບອົງການຈັດຕັ້ງສາກົນໃນດ້ານການສົ່ງເສີມ ແລະປົກປ້ອງສິດທິມະນຸດ, ບໍ່ແມ່ນທີ່ເອີ້ນວ່າ "ເວົ້າແນວນຶ່ງ ແຕ່ພາກປະຕິບັດເປັນອີກແນວນຶ່ງ ແຕ່ປະການໃດ.

ເຖິງຄາວແລ້ວ, ທີ່ພັກຣັດຕ້ອງສແດງຄວາມຈິງໃຈ, ອອກມາແກ້ໄຂບັນຫາຊາດຮ່ວມກັນ ກັບພວກເຮົາໃນເມື່ອສະພາບການທຸກຢ່າງໄດ້ອຳນວຍໃຫ້ໝົດແລ້ວ, ພວກເຮົາຕ້ອງພ້ອມກັນຜ່ານຜ່າ ທຸກອຸປສັກນາໆປະການ.

ເພື່ອເຮັດໃຫ້ການໂຮມລາວສອງຝ່າຍນີ້ ເກີດມີຂຶ້ນຢ່າງຈິບງາມ ໃຫ້ເປັນໄປຕາມ ຄວາມມຸ້ງມາດ ປາຖນາຂອງ ປະຊາຊົນລາວທັງຊາດ ແລະສາກົນ.

**ປະຊາຊົນມີໄຊຍ໌ ເສຣີປະຊາທິປະໄຕອົງອາດ ຊາດລາວຈົ່ງຈເຣີນ.**
**ຂໍຂອບໃຈ**

**ສູນກາງຕາງໜ້າ**
**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**
**ຫ້ອງປະທານພັກ**
**ອາຈານ ສົມບົກ ຟອງສູວັນ**
**ວັນທີ ໒໔ ກໍຣະກະດາ ໒໐໑໐.**